## ແຜນການສອນ

## ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 18 ພຶສພາ 2008 ( 05-18-2008 )

# ເປັນຄົນໄວ້ເນື້ອເຊື່ອໃຈໄດ້:

**ຂໍ້ພຣະຄັມພີໃນບົດຮຽນ:** (1 ຊາມູເອນ 18:1-4; 19:4-7; 20:10-13, 16-17)

**ຄຳຖາມແຫ່ງຊີວິດ:** ແມ່ນຫຍັງທີ່ຂ້າພະເຈົ້າສາມາດໃຊ້ໃນການກໍ່ສ້າງຄວາມໄວ້ວາງໃຈໃນຄວາມສັມພັນ?

**ພຣະຄັມພີແຫ່ງຄວາມຈິງ:** ສາຍສັມພັນທີ່ແໜ້ນໜຽວແມ່ນສ້າງຂຶ້ນໃນຄວາມໄວ້ວາງໃຈ, ແລະການທີ່ພວກເຮົາຈະສາມາດພິສູດໃຫ້ເຫັນໄດ້ວ່າ ຈະໄວ້ເນື້ອເຊື່ອໃຈໄດ້ຫລືບໍ່ນັ້ນ ກໍຜ່ານການຕັດສິນໃຈແນ້ວແນ່, ຄວາມຈົງຮັກພັກດີ, ຄວາມສັດຊື່, ແລະຄວາມສເມີຕົ້ນສເມີປາຍ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ວຍທ່ານໃນການສ້າງສາຍສັມພັນອັນໝັ້ນຄົງແທ້ຈິງໂດຍ:

- ການມອງເຫັນຄຸນຄ່າຂອງການໄວ້ວາງໃຈໃນສາຍສັມພັນ ແລະ
- ການຕັດສິນໃຈໃນການເລີ້ມຕົ້ນການກໍ່ຕັ້ງຄວາມໄວ້ວາງໃຈໃນສ່ວນຕົວ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "<u>ແຜນການສອນ</u>", ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>**

- ຂຽນ **ຄວາມໄວ້ວາງໃຈ** ໃສ່ກະດານ. ຖາມ: ຄວາມເຊື່ອໄວ້ວາງໃຈໃນຄວາມສັມພັນຂອງທ່ານຢູ່ໃນຣະດັບໃດ ໃຫ້ໝາຍ ມາດຕາການຊັ່ງຊາຂອງທ່ານຕາມ 1-10, ວ່າທ່ານຢູ່ໃນຣະດັບໃດ? ທ່ານຈະຮູ້ໄດ້ແນວໃດວ່າ ທ່ານເປັນຜູ້ທີ່ເຊື່ອໄວ້ວາງໃຈໄດ້?
- ບົດຮຽນໃນມື້ນີ້ໄດ້ແນໃສ່ຄຸນນະພາບ 4 ຢ່າງໃນການສ້າງຄວາມສັມພັນທີ່ໄວ້ວາງໃຈໄດ້.

1. <u>ການຕັດສິນໃຈ:</u>     (1 ຊາມູເອນ 18-1-4)

- ຂໍໃຫ້ນັກຮຽນອາສາສມັກອ່ານ  1 ຊາມູເອນ 18:1-4
- ແບ່ງປັນຂໍ້ມູນຕ່າງ ໆ ຈາກ 1 ຊາມູເອນບົດທີ 17 ໃຫ້ອະທິບາຍໃນການທີ່ດາວິດມາຫາຊາອູນ ຂໍໃຫ້ນັກຮຽນຜູ້ນຶ່ງອ່ານ 1 ຊາມູເອນ 18:1-4 ອີກເທື່ອນຶ່ງ.
- ສແວງຫາຄວາມຮູ້ດ້ວຍການສອບຖາມ: ການທີ່ໂຢນາທານບໍ່ມີຄວາມອິດສາດາວິດນັ້ນໄດ້ສ້າງຄວາມປລາດໃຈໃຫ້ແກ່ທ່ານຢູ່ບໍ່? ແມ່ນຫຍັງທີ່ເປັນການຢັ້ງຢືນໃນການຕັດສິນໃຈໃຫ້ມີຄວາມສັມພັນຄົງຢູ່ໃນເມື່ອຜູ້ອື່ນໄດ້ດີກວ່າຕົນ?
- ຄຳຖາມ: ແມ່ນຫຍັງທີ່ຂັດຂວາງຄວາມສັມພັນຄວາມເຊື່ອໄວ້ວາງໃຈຕໍ່ກັນ ແລະກັນ?.  ໃຫ້ນັກຮຽນວາງແຜນທຳການຕັດສິນໃຈໃນຄວາມສັມພັນເພື່ອສະແດງໃຫ້ເຫັນວ່າຕົນເປັນຄົນທີ່ໄວ້ວາງໃຈໄດ້.
- ບອກນັກຮຽນວ່າ: ການຕັດສິນໃຈແນ້ວແນ່ນັ້ນເປັນການສ້າງສາຍສັມພັນອັນແໜ້ນໜຽວໃນຄວາມໄວ້ວາງໃຈ

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>   (1 ຊາມູເອນ 18-1-4)
1. ເປັນດ້ວຍເຫດໃດໂຢນາທານຈຶ່ງສາບານເປັນເພື່ອນທີ່ດີຂອງດາວິດ?
2. ໂຢນາທານໄດ້ສັນຍາ ແລະໄດ້ໃຫ້ຫຍັງແກ່ດາວິດ?
3. ສິ່ງທີ່ໂຢນາທານເອົາໃຫ້ດາວິດແຕ່ລະຢ່າງນັ້ນມີຄວາມໝາຍແນວໃດ?
4. ສິ່ງທີ່ສຳຄັນຂອງການຕັດສິນໃຈເປັນເພື່ອນທີ່ດີກັນນັ້ນຄືແນວໃດ?

2. <u>ຈົງຮັກພັກດີ:</u>    (1 ຊາມູເອນ 19:4-7)

- ຂໍໃຫ້ນັກຮຽນສອງຄົນອາສາສມັກອ່ານພຣະທັມ   1 ຊາມູເອນ 19:4-7
- ໂຢນາທານໄດ້ສະແດງຄວາມຈົງຮັກພັກດີຕໍ່ດາວິດທຸກສະພາບການຢ່າງໃດແດ່?
- ໃນເມື່ອມີຜູ້ຕໍ່ສູ້ທ່ານ ທ່ານເຄີຍມີຜູ້ໃດຜູ້ນຶ່ງເຂົ້າຂ້າງທ່ານບໍ່?
- ແມ່ນຫຍັງທີ່ເປັນຜົນຂອງການເປັນເພື່ອນທີ່ດີຕໍ່ກັນ?
- ໜູນໃຈນັກຮຽນໃຫ້ມີຄວາມສົນໃຈໃນການສ້າງຄວາມສັມພັນທີ່ໄວ້ເນື້ອເຊື່ອໃຈໄດ້.
- ເຮັດແນວໃດເຂົາເຈົ້າຈຶ່ງສາມາດຢືນຄຽງຂ້າງກັບຄົນອື່ນທີ່ໄດ້ດີລື່ນເຮົາດ້ວຍຄວາມຈົງຮັກພັກດີໄດ້?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>  (1 ຊາມູເອນ 19:4-7)
1. ໂຢນາທານໄດ້ກ່າວຕໍ່ພໍ່ຂອງລາວເພື່ອປົກປ້ອງດາວິດວ່າຢ່າງໃດ?
2. ການເວົ້າແບບນີ້ເປັນການສ່ຽງຕໍ່ອັນຕະລາຍຢ່າງໃດທີ່ເວົ້າກັບກະສັດໃນທາງນີ້?
3. ໂຢນາທານໄດ້ໂນ້ມນ້າວເລົ້າໂລມພໍ່ຂອງລາວແນວໃດ?
4. ໂຢນາທານໄດ້ສະແດງທ່າທີຄວາມຈົງຮັກພັກດີແນວໃດ?
5. ໃນຄວາມຈົງຮັກພັກດີມີຄວາມສຳຄັນແນວໃດຕໍ່ຄວາມສຳພັນ?

3. <u>ສັດຊື່:</u>    (1 ຊາມູເອນ 20:10-13)

- ຂໍໃຫ້ນັກຮຽນອາສາສມັກອ່ານ   1 ຊາມູເອນ 20:10-13

- ເປັນດ້ວຍເຫດໃດຄວາມສັມພັນທີ່ສັດຊື່ຈຶ່ງຫາຍາກໃນຊີວິດຂອງທ່ານ?
- ແມ່ນຫຍັງເປັນສິ່ງທີ່ຕອບແທນຄວາມສັດຊື່?
- ຂໍໃຫ້ນັກຮຽນຕອບຄຳຖາມ ແຕ່ລະຄຳຖາມ ເພື່ອສະແດງເຖິງຄວາມສັດຊື່ ແລະໃນຄວາມຮູ້ສຶກທີ່ເປັນຄົນສັດຊື່ຕໍ່ຄວາມສັມພັນອັນດີທີ່ໄວ້ວາງໃຈໄດ້. ຄວນຈະຕອບສນອງແນວໃດ? ບາງຄັ້ງກໍເປັນການສ່ຽງທີ່ຈະເຮັດໃຫ້ຄົນໄວ້ເນື້ອເຊື່ອໃຈໃນການພົວພັນນັ້ນ.

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (1 ຊາມູເອນ 20:10-13)
1. ໂຢນາທານມີຄວາມສັດຊື່ຕໍ່ດາວິດໃນທາງໃດແດ່?
2. ເປັນດ້ວຍເຫດໃດໂຢນາທານຈຶ່ງໃຫ້ຄຳອວຍພອນໃນສິ່ງທີ່ດາວິດໄດ້ທຳສຳເຣັດ?
3. ຖ້າຫາກໂຢນາທານບໍ່ມີຄວາມສັດຊື່ຕໍ່ດາວິດແລ້ວຈະມີຫຍັງເກີດຂຶ້ນແກ່ດາວິດ?
4. ຖ້າຂາດຄວາມສັດຊື່ໃນຄວາມສັມພັນແລ້ວຈະມີຫຍັງເກີດຂຶ້ນ?

4. <u>ສມ່ຳສເມີ:</u> (1 ຊາມູເອນ 20:16-17)
- ຂໍໃຫ້ນັກຮຽນອາສາສມັກອ່ານ 1 ຊາມູເອນ 20:16-17
- ຄຳຖາມ: ຖ້າຄວາມສັມພັນມີຄວາມເຫັນພ້ອມກັນຜົນຮັບອອກມາຈະເປັນແນວໃດ?
- ການເຫັນພ້ອມໃນຄວາມສັມພັນທີ່ອອກມາຈາກທ່ານແມ່ນຫຍັງ?

<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> (1 ຊາມູເອນ 20:16-17)
1. ໃນຈຸດນີ້ຄຳສັນຍາຂອງໂຢນາທານກັບດາວິດທີ່ໄດ້ສັນຍາຕໍ່ກັນນັ້ນວ່າແນວໃດແດ່?
2. ເປັນຫຍັງໂຢນາທານຈຶ່ງຂໍຮ້ອງໃຫ້ດາວິດສັນຍາຕໍ່ລາວກ່ອນ ກ່ອນທີ່ລາວສັນຍາຕໍ່ດາວິດ?
3. ເປັນຫຍັງຈຶ່ງວ່າການຕົກລົງເຫັນພ້ອມກັນຈຶ່ງເປັນສິ່ງສຳຄັນ?
4. ເປັນຫຍັງການຕົກລົງເຫັນພ້ອມກັນນັ້ນຈຶ່ງເປັນການຍາກສຳລັບທ່ານ?

## <u>ບົດຮຽນພຣະຄັມພີແຫ່ງຄວາມຈິງ</u>

- ຄວາມໄວ້ເນື້ອເຊື່ອໃຈທຳໃຫ້ຄວາມສັມພັນຈະເຣີ່ມຂຶ້ນໃນຕົວຂອງພວກເຮົາ ໂດຍການຕັດສິນໃຈພ້ອມກັນຢ່າງແນ້ວແນ່.
- ຄວາມຈິງຮັກພັກດີເປັນການຂຍາຍເພື່ອໃຫ້ໄດ້ເພື່ອນຝູງຫລາຍຂຶ້ນຕາມຄວາມຕ້ອງການ.
- ຄວາມສັດຊື່ສ້າງຄວາມສັມພັນໃຫ້ແໜ້ນແຟ້ນ ແລະປ້ອງກັນການທຳລາຍຄວາມສັມພັນອີກດ້ວຍ.
- ຮັກຢ່າງສມ່ຳສເມີເປັນຂໍ້ຜູກມັດໃຫ້ທັງສອງຢູ່ໃນຄວາມສັມພັນອັນດີຕລອດໄປ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH